FRANCE ÉDUCATION INTERNATIONAL

INSTITUT FRANÇAIS LAOS ສະຖາບັນຝຣັ່ງ

**ຂັ້ນຕອນການສອບເສັງ DELF**
**ສຳລັບຄູອາຈານ**

ຜູ້ສະໝັກສອບເສັງ DELF ຈະບໍ່ໄດ້ຮັບອະນຸຍາດໃຫ້ລົງທະບຽນຫຼາຍໆຄັ້ງໃນເວລາດຽວກັນສຳລັບການສອບເສັງໃນລະດັບດຽວກັນ (ສະບັບການສອບເສັງທີ່ແຕກຕ່າງກັນ ຫຼື ບໍ່ກໍ່ຕາມ). ຜູ້ສະໝັກການສອບເສັງຕ້ອງລໍຖ້າຜົນຂອງການລົງທະບຽນຄັ້ງທີ 1 ກ່ອນ, ເພື່ອຈະພິຈາລະນາສອບເສັງຄືນຄັ້ງໃໝ່: "ຜູ້ສະໝັກ ມີສິດລົງທະບຽນສອບເສັງຕາມເທົ່າທີ່ຕ້ອງການ ຈົນກ່ວາຈະໄດ້ຮັບໃບປະກາດເສັງຜ່ານ, ພາຍໃຕ້ເງື່ອນໄຂທີ່ຈະຕ້ອງໄດ້ຮັບຜົນສອບເສັງທີ່ລົງທະບຽນແຕ່ລະຄັ້ງກ່ອນ ຈຶ່ງຈະສາມາດດຳເນີນການລົງທະບຽນຄັ້ງໃໝ່ໄດ້." (https://www.ciep.fr/delf-dalf/droits-devoirs-candidats).

DELF-DALF ແມ່ນການສອບເສັງ ປະເມີນຄວາມຮູ້ລະດັບພາສາຝຣັ່ງຂອງແຕ່ລະບຸກຄົນ ເຊິ່ງບໍ່ສາມາດປ່ຽນຄວາມຮູ້ຄວາມສາມາດເປັນການທ່ອງບົດທີ່ກະກຽມໄວ້ ໃນຮູບແບບການຈື່ຈຳໃນການຕອບຄຳຖາມ; ດັ່ງນັ້ນ, ບົດບັນທຶກທີ່ຖືກຈົດຈຳ ຫຼື ບົດທີ່ຖືກດັດແກ້ໄຂ ແລະ ຖືກລະບຸໄວ້ໃນສຳເນົາຜູ້ສອບເສັງຫຼາຍສະບັບ ເມື່ອຜູ້ກວດບົດສອບເສັງພົບເຫັນຈະຖືພິຈາລະນາວ່າເປັນການລະເມີດກົດລະບຽບການສອບເສັງໂດຍລັກເອົາຄວາມຄິດຜູ້ອື່ນ ແລະ ຈະສົ່ງຕໍ່ໃຫ້ ຄະນະກຳມະການວິໄນຂອງປະເທດຝຣັ່ງ -ການສຶກສາສາກົນ ກວດກາພິຈາລະນາຕາມຄວາມຜິດຂອງບຸກຄົນດັ່ງກ່າວ.

ລາຄາພິເສດສະເພາະຄູສອນພາສາຝຣັ່ງ ແລະ ຄູທີ່ນຳໃຊ້ພາສາຝຣັ່ງໃນອົງກອນລັດ (ໂຮງຮຽນປະຖົມ, ມັດທະຍົມ, ມະຫາວິທະຍາໄລ).

**ການລົງທະບຽນ**

ທ່ານສາມາດລົງທະບຽນສອບເສັງໄດ້ດັ່ງນີ້ :

- ສົ່ງແບບຟອມລົງທະບຽນທີ່ພະແນກຮັບຕ້ອນຂອງສະຖາບັນຝຣັ່ງພ້ອມເອກະສານຢັ້ງຢືນການເຮັດວຽກ ຫຼື ສາມາດສົ່ງໃບລົງທະບຽນພ້ອມເອກະສານຢັ້ງຢືນການເຮັດວຽກ ຫາທີ່ຢູ່ accueil@if-laos.org
- ລໍຖ້າຄຳຢັ້ງຢືນການຕອບຮັບຈາກສະຖາບັນຝຣັ່ງ
- ຈ່າຍຄ່າທຳນຽມສອບເສັງ DELF ດ້ວຍເງິນສົດ (ສະກຸນເງິນກີບ) ທີ່ພະແນກຕ້ອນຮັບຂອງສະຖາບັນຝຣັ່ງ ຫຼື ສາມາດສົ່ງໃບຢັ້ງຢືນການໂອນເງິນຫາທີ່ຢູ່ accueil@if-laos.org

## RELEVÉ D’IDENTITÉ BANCAIRE LOCALE

Nom Titulaire

**INSTITUT FRANCAIS DU LAOS - REGIE VTE**

| Nom Agence | Code Agence | Swift Code | Code Compensation |
|---|---|---|---|
| **Corporate** | **026** | **BFLLLALA** | **-** |

Numéro de compte

**026000036011000039**

Domiciliation

**Corporate 11 Lane Xang Road Unit 19, Hatsady Neua Village VIENTIANE Capital, LAO PDR**

Numéro de compte bancaire

**-**

ທ່ານສາມາດຮັບໃບບິນທັນທີຫຼັງການຊຳລະຄ່າຮຽນເປັນທີ່ຮຽບຮ້ອຍ.

**ເອກະສານນັດເຂົ້າຫ້ອງເສັງ**

ທ່ານຈະໄດ້ຮັບເອກະສານນັດເຂົ້າຫ້ອງເສັງທາງເມວກ່ອນມື້ເສັງທີ່ໄດ້ກຳນົດໄວ້.

**ກົດລະບຽບຂອງການສອບເສັງ**

ທ່ານຈະຕ້ອງປະຕິບັດກົດລະບຽບການສອບເສັງດັ່ງນີ້ :

- ມາກ່ອນເວລາສອບເສັງ 10 ນາທີຕາມໂມງທີ່ກຳນົດໃນເອກະສານນັດເຂົ້າຫ້ອງເສັງ
- ສະເໜີບັດປະຈຳໂຕ ຫຼື ບັດນັກສຶກສາ ກ່ອນເຂົ້າຫ້ອງສອບເສັງແຕ່ລະຄັ້ງ
- ປະຕິບັດຕາມກົດລະບຽບຂອງການສອບເສັງ : ຖ້າຫາກມີການຝ່າຝືນກົດລະບຽບ ນັກສອບເສັງຈະຖືກລົງໂທດ

**ປະກາດຜົນການສອບເສັງ**

- ຫຼັງຈາກສອບເສັງ 15 ມື້ , ສາມາດກວດເບິ່ງຜົນການສອບເສັງຂອງທ່ານໄດ້ທີ່ເວັບໄຊ້ http://www.iflaos.org/certification-delf/
- ຫຼັງການສອບເສັງ 3 ອາທິດ, ສາມາດຕິດຕໍ່ພົວພັນເອົາໃບຢັ້ງຢືນການເສັງຜ່ານ ໄດ້ທີ່ພະແນກຮັບຕ້ອນຂອງສະຖາບັນຝຣັ່ງ ຫຼື ສົ່ງຫາ accueil@if-laos.org ເພື່ອຂໍສະແກນເອກະສານໃຫ້.
- ຫຼັງການສອບເສັງປະມານ 3 ເດືອນ, ຈະມີຂໍ້ຄວາມແຈ້ງລົງເພດເຟສບຸກຂອງສະຖາບັນຝຣັ່ງໃຫ້ທ່ານເຂົ້າມາພົວພັນເອົາໃບປະກາດ ຕ້ອງມີບັດປະຈຳຕົວ ຫຼື ບັດນັກສຶກສາມາຢັ້ງຢືນກ່ອນຮັບໃບປະກາດທຸກຄັ້ງ.

ທີ່............................. ., ວັນທີ........../......../20...

ລາຍເຊັນ